ອົງການເກັບກູ້ລະເບີດ ແມັກ ແມ່ນອົງການຊ່ວຍເຫຼືອທາງດ້ານມະນຸດສະທຳ ໃນການກວດກູ້ສິ່ງທີ່ຄົງຄ້າງຈາກສົງຄາມ ເພື່ອສ້າງຜົນປະໂຫຍດໃຫ້ກັບຊຸມຊົນໃນທົ່ວໂລກ. ອົງການເກັບກູ້ລະເບີດ ແມັກ ໄດ້ຮັບລາງວັນໂນເບວທາງດ້ານສັນຕິພາບໂລກ ໃນປີ 1997. ພວກເຮົາໄດ້ດຳເນີນການປະຕິບັດງານ ແລະ ຫາວິທີທາງຊ່ວຍໃນຂະບວນການສ້າງສັນຕິພາບ ແລະ ຄວາມໝັ້ນຄົງ ໃນບັນດາປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມໃນອາດີດ. ໃນໄລຍະ 25 ປີທີ່ຜ່ານມາ. ພວກເຮົາໄດ້ສ້າງຄວາມປອດໄພ ໂດຍການກຳຈັດ ແລະ ທຳລາຍ ກັບດັກລະເບີດ, ລູກລະເບີດ ແລະ ອາວຸດ ນັບເປັນຈຳນວນຫຼວງຫຼາຍ.

# ປະກາດຮັບສະໝັກວຽກ (ຄົນລາວ)





ອົງການເກັບກູ້ລະເບີດ ແມັກ ໄດ້ເປີດໂອກາດທີ່ເທົ່າທຽມກັນ ໃຫ້ກັບຜູ້ສະໝັກທຸກຄົນທີ່ມີຄຸນວຸດທິເໝາະສົມໂດຍບໍ່ຈຳກັດ ເລື່ອງ: ເພດ, ຄວາມເປັນພິການ, ຊົນເຜົ່າ, ຫຼື ສາສະໜາ/ ຄວາມເຊື່ອທາງສາສະໜາ




ອົງການເກັບກູ້ລະເບີດ ແມັກ ໄດ້ເຂົ້າມາເຮັດວຽກໃນ ສປປ ລາວ ຕັ້ງແຕ່ 1994 ໃນການແກ້ໄຂບັນຫາ ແລະ ໃຫ້ຄວາມຊ່ວຍເຫຼືອ ຕໍ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ເພື່ອໃຫ້ພວກເຂົາມີສະພາບແວດລ້ອມທີ່ປອດໄພໃນອານາຄົດ. ໂດຍມີເປົ້າໝາຍໃນການແບ່ງເບົາຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ທີ່ຍັງຄົງສ້າງຄວາມເສຍຫາຍຕໍ່ກັບການດຳລົງຊີວິດ, ສຸຂະພາບ, ການພັດທະນາເສດຖະກິດ - ສັງຄົມ ຂອງປະຊາຊົນ ແລະ ຊຸມຊົນ ທີ່ຢູ່ໃນແຂວງ ຊຽງຂວາງ ແລະ ແຂວງຄຳມ່ວນ.

## ຜູ້ຄຸມງານພາກສະໜາມ (FS)

### 02 ຕຳແໜ່ງ ປະຈຳຢູ່ ອົງການເກັບກູ້ລະເບີດ ແມັກ ແຂວງ ຄຳມ່ວນ

**ໜ້າທີ່ຮັບຜິດຊອບຫລັກ:**

- ຮັບປະກັນໃຫ້ວຽກງານກວດກູ້, ການສຳຫຼວດ ແລະ ທຳລາຍລະເບີດ ມີຄວາມປອດໄພ, ມີປະສິດທິພາບ ແລະ ປະສິດທິຜົນ, ຖືກຕ້ອງຕາມມາດຕະຖານການປະຕິບັດງານ ແລະ ຕາມຫລັກວິຊາການທີ່ກ່ຽວ ຂ້ອງ.
- ຮັບປະກັນການວາງແຜນວຽກ ແລະ ການນຳໃຊ້ທີມງານ ໃຫ້ມີປະສິດທິຜົນ.
- ຕິດຕາມກວດກາການເຄື່ອນໄຫວວຽກງານ ແລະ ຕິດຕາມກວດກາຄຸນນະພາບຂອງການບໍລິຫານ ທີມງານ ໃຫ້ຖືກຕ້ອງຕາມມາດຕະຖານການປະຕິບັດງານ ແລະ ແນວທາງການຄຸ້ມຄອງຄຸນນະ ພາບ.
- ຮັບປະກັນວ່າຫົວໜ້າທີມ ແລະ ພະນັກງານຂອງທີມງານ ທຸກຄົນໄດ້ຮັບການລຸລ່ວງວຽກຢ່າງຖືກ ຕ້ອງ, ເຂົ້າໃຈນະໂຍບາຍ, ໜ້າທີ່ ແລະ ຄວາມຮັບຜິດຊອບຕ່າງໆ, ຍຶດໝັ້ນຕໍ່ມາດຕະຖານ ການປະຕິບັດງານ.
- ຮັບປະກັນຫົວໜ້າທີມຮັກສາລະບຽບວິໄນ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງທີມງານ ໃນເວລາເຮັດວຽກຢູ່ພາກສະໜາມ.
- ຄຸ້ມຄອງການນຳໃຊ້ທາດລະເບີດ ແລະ ຮັບປະກັນໃຫ້ມີການບັນທຶກ ຫລື ໃຫ້ມີບັນຊີຕິດຕາມ ການນຳໃຊ້ ແລະ ຕິດຕາມທາດລະເບີດຝາກຢູ່ສາງ ທີ່ມີຄວາມຖືກຕ້ອງຊັດເຈນ ແລະ ສາມາດກວດກາໄດ້ທຸກເວລາ.
- ຊີ້ນຳພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃນການວາງແຜນວຽກ ແລະ ການຈັດບຸລິມະສິດໜ້າວຽກ.
- ຄວບຄຸມ ແລະ ຕິດຕາມກວດກາ ແຜນຮອງຮັບ ກໍລະນີສຸກເສີນທັງໝົດ ແລະ ມີຄວາມກຽມພ້ອມຢູ່ຕະຫລອດເວລາ.

**ວຽກບໍລິຫານ**

- ຊ່ວຍ POM ໃນການສະໜອງຂໍ້ມູນເພື່ອເຮັດແຜນວຽກພາກສະໜາມປະຈຳແຂວງ.
- ດຳເນີນການກວດ ຄຸນນະພາບ 100% ຂອງເອກະສານດັ່ງຕໍ່ໄປນີ້: ແຟ້ມເອກະສານກວດກູ້, ແຟ້ມເອກະສານການສາຫຼວດທາງດ້ານວິຊາການ, ແຟ້ມເອກະສານທຳລາຍລະເບີດ, ເອກະສານບັນທຶກການຈ່າຍດິນລະເບີດ ແລະ ບັນຊີອຸປະກອນຂອງທີມງານ.
- ລາຍງານການນຳໃຊ້ທາດລະເບີດປະຈຳເດືອນ ຂອງທີມທີ່ຢູ່ພາຍໃຕ້ການຊີ້ນຳຂອງຕົນ, ສົ່ງໃຫ້ POM ຕາມເວລາທີ່ໄດ້ກຳນົດໄວ້.

*ໝາຍເຫດ: ລາຍລະອຽດໜ້າວຽກສະບັບເຕັມ ແມ່ນສາມາດຂໍໄດ້ຈາກຝ່າຍບຸກຄະລາກອນ.*

**ຄວາມຕ້ອງການ ແລະ ຄຸນວຸດທິ:**

- ຕ້ອງຮຽນຈົບຫຼັກສູດການທຳລາຍລະເບີດ **ຂັ້ນ 3 (EOD 3) ຂຶ້ນໄປ.**
- ຕ້ອງມີປະສົບການໃນຕຳແໜ່ງ**ຫົວໜ້າທີມ**ຢ່າງໜ້ອຍ **(2)** ປີຂຶ້ນໄປ.
- ລະດັບວິຊາສະເພາະ ຈົບຊັ້ນສູງ ຫລື ປະລິນຍາຕີໃນສາຂາໃດໜຶ່ງ.
- ມີຄວາມເຂົ້າໃຈກ່ຽວກັບຂັ້ນຕອນໃນການປະຕິບັດວຽກຢູ່ໃນພາກສະໜາມ.
- ຄວາມຮູ້ດ້ານຄອມພິວເຕີ: ມີຄວາມຮູ້ພື້ນຖານໂປຼແກມ ໄມໂຄຣຊ໋ອບ ອ໋ອບຟິດ (ເຊັ່ນວ່າ: Excel, Word, and PowerPoint).
- ມີທັກສະຄວາມເປັນຜູ້ນຳສູງ ແລະ ສາມາດເຮັດໄດ້ຫຼາຍໜ້າວຽກ.

- ມີຄວາມສາມາດໃນການຂັບຂີ່ພາຫານະປະເພດລົດຈັກ ແລະ **ມີໃບຂັບຂີ່ທີ່ຖືກຕ້ອງຕາມກົດໝາຍ**
- ສາມາດເຮັດວຽກຢູ່ສະໜາມໄດ້ ແລະ ສາມາດອອກໄປເຮັດວຽກໄກບ້ານເປັນເວລາ 3 ອາທິດຕໍ່ເດືອນໄດ້.
- ສາມາດ ເວົ້າ ແລະ ຂຽນພາສາລາວໄດ້ເປັນຢ່າງດີ ແລະ ຖ້າສາມາດ ເວົ້າ ແລະ ຂຽນ ພາສາອັງກິດ ຈະພິຈາລະນາເປັນພິເສດ.
- ມີຄວາມໝັ້ນໃຈໃນການນຳໃຊ້ອຸປະກອນ IT ລວມມີ ແທັບເບຣັດ, ໂທລະສັບ ແລະ ຄອມພິວເຕີ.
- ມີຄວາມຮູ້ດ້ານລະບົບແຜນທີ່, ຮູ້ນຳໃຊ້ GPS ແລະ ລະບົບ Google Earth.
- ເຄົາລົບຕໍ່ກັບນະໂຍບາຍພາຍໃນ ຂອງອົງການເກັບກູ້ລະເບີດ ແມັກ.
- ສາມາດເຮັດວຽກເປັນທີມໄດ້ດີ.

*ຕ້ອງມີໃບຂັບຂີ່ (ໃບຂັບຂີ່ລົດຈັກ: ປະເພດ A)

ອົງຕາມຄຳໝັ້ນສັນຍາຂອງອົງການເກັບກູ້ລະເບີດ ແມັກ ວ່າດ້ວຍນະໂຍບາຍດ້ານການປົກປ້ອງ, ການຄັດເລືອກຕຳແໜ່ງນີ້ແມ່ນຕ້ອງ ຜ່ານຂະບວນການກວດສອບປະຫວັດຄວາມເປັນມາ ເພື່ອຢັ້ງຢືນຄວາມຖືກຕ້ອງ ກ່ອນທີ່ຈະມີການສະເໜີການຈ້າງງານ, ອົງການເກັບ ກູ້ລະເບີດແມັກ ມຸ່ງໝັ້ນໃນຫຼັກການຂອງຄວາມຫຼາກຫຼາຍ, ສິດສະເໝີພາບ ແລະ ການມີສ່ວນຮ່ວມ ແລະ ເປີດໂອກາດໃນການຈ້າງ ງານແບບເທົ່າທຽມກັນ. ຖ້າທ່ານຄິດວ່າ ທ່ານມີຄຸນວຸດທິເໝາະສົມກັບບົດບາດຂອງຕຳແໜ່ງນີ້ ໃນອົງການຂອງພວກເຮົາ, ພວກເຮົາຍິນ ດີຕ້ອນຮັບການສະໝັກງານຂອງທ່ານ ໂດຍບໍ່ຄຳນຶງເຖິງພື້ນຖານຄວາມເປັນຢູ່ຂອງທ່ານ. ພວກເຮົາມຸ່ງໝັ້ນໃນການສະໜອງສະພາບ ແວດລ້ອມໃນການເຮັດວຽກແບບມີສ່ວນຮ່ວມ ແລະ ໃຫ້ສະໜັບສະໜູນ ເພື່ອໃຫ້ພະນັກງານທຸກຄົນຮູ້ສຶກໄດ້ຮັບຄວາມເຄົາລົບ ແລະ ໄດ້ຮັບການສະໜັບສະໜູນ ແລະ ໃນການບັນລຸຄວາມອາດສາມາດຂອງເຂົາເຈົ້າ.

ທຸກໆຮູບແບບຂອງການຈ້າງງານ ແລະ ຂະບວນການຄັດເລືອກພະນັກງານ, ບໍ່ວ່າຈະເປັນການຈ້າງງານພະນັກງານໃໝ່ຄັ້ງທຳອິດ ຫຼື ການເລື່ອນຕຳແໜ່ງພະນັກງານພາຍໃນອົງການ ຈະອີງໃສ່ຄຸນສົມບັດ, ຄຸນວຸດທິ, ຄວາມສາມາດ, ຜົນການປະຕິບັດວຽກງານ ແລະ ຄວາມຕ້ອງການຂອງອົງການ , ອົງການເກັບກູ້ລະເບີດ ແມັກ (ຫຼື ພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບຂະບວນການຄັດ ເລືອກພະນັກງານ ຂອງອົງການເກັບກູ້ລະເບີດ ແມັກ) ຈະບໍ່ເກັບຄ່າທຳນຽມ (ຫຼື ຮັບເອົາຂອງຂວັນ ຫຼື ສິ່ງຕອບ ແທນອື່ນໆ) ໃນທຸກຂັ້ນຕອນຂອງຂະບວນການຄັດເລືອກພະນັກງານ (ການປະກາດຮັບສະໝັກວຽກ, ການສຳ ພາດ, ການປະເມີນຜົນ), ຖ້າທ່ານມີຂໍ້ຂ້ອງໃຈກ່ຽວກັບຂະບວນການນີ້ ທ່ານສາມາດລາຍງານ ໃຫ້ອົງການຂອງພວກເຮົາຜ່ານທາງ ອີເມວ safeguarding.la@maginternational.org

**ຂໍ້ກຳນົດ ແລະ ເງື່ອນໄຂ:**

ອົງການເກັບກູ້ລະເບີດ ແມັກ ປະຈຳ ສປປ ລາວ ມີສະພາບແວດລ້ອມຂອງການເຮັດວຽກທີ່ດີ, ສະຫວັດດີການທີ່ດີ ແລະ ມີນະໂຍບາຍໃນການສົ່ງເສີມຝຶກອົບຮົມເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ກັບພະນັກງານ.

**<u>ຂັ້ນຕອນການສະໝັກສຳລັບຕຳແໜ່ງນີ້:</u>**

ພະນັກງານອົງການກັບກູ້ລະເບີດ ແມັກ ທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ສາມາດສະໝັກຕຳແໜ່ງນີ້ໄດ້. ຜູ້ສະໝັກຈຳເປັນຕ້ອງກຽມ ແລະ ສົ່ງເອກະສານຕໍ່ໄປນີ້:

- **ປະຫວັດຫຍໍ້ ອັບເດດລ່າສຸດ (CV) ແລະ ຈົດໝາຍສະໝັກວຽກ (Cover Letter)**
- **ສຳເນົາ/ສະແກນ ໃບຢັ້ງຢືນຮຽນຈົບຫລັກສູດ ວິຊາການເກັບກູ້ລະເບີດ EOD ຂັ້ນ 3**
- **ສຳເນົາ/ສະແກນ ໃບຂັບຂີ່**
- **ສຳເນົາປື້ມມະໂນຄົວ ຫຼື ບັດປະຈຳຕົວ**
- **ໃບຢັ້ງຢືນທີ່ຢູ່.**
- **ໃບຢັ້ງຢືນຄ້ຳປະກັນຈາກນາຍບ້ານທີ່ຢູ່ປັດຈຸບັນ.**
- **ສຳເນົາໃບຜ່ານງານ (ຖ້າມີ).**

***ເອກະສານການສະໝັກທັງໝົດ ແມ່ນໃຫ້ສົ່ງຜ່ານລິ້ງ:*** https://forms.gle/fKG3CKsF4bNX7GEd8
ຫຼື ສົ່ງທາງອີເມວມາທີ່: ***Human.Resources.Laos@maginternational.org***
(ໂດຍລະບຸຫົວຂໍ້: "ຄຳຮ້ອງສະໝັກຕຳແໜ່ງ **FS-KHM**")

**ປິດຮັບຄຳຮ້ອງ: ເວລາ 4:00 ໂມງແລງ ວັນທີ 31 ມີນາ 2026.**

**ການສະໝັກທີ່ລ່າຊ້າຈາກເວລາທີ່ລະບຸຂ້າງເທິງຈະບໍ່ຖືກພິຈາລະນາ.**

ຖ້າຫາກທ່ານມີຄຳຖາມ ຫຼື ຂໍ້ຂ້ອງໃຈກ່ຽວກັບການສະໝັກວຽກ, ກະລຸນາຕິດຕໍ່ເບີໂທ: **020 55561745 / 020 55535625**